ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ສະໄໝສາມັນ ຄັ້ງທີ II ປະຈຳປີ 2021






ໃນວັນທີ 12 ສິງຫາ 2021, ທີ່ຫ້ອງປະຊຸມຊັ້ນ VIII ຕຶກຕະຫຼາດຫຼັກຊັບລາວ ໄດ້ຈັດກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ສະໄໝສາມັນ ຄັ້ງທີ II ປະຈຳປີ 2021ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ປະທານ ຄຕຟງ. ພ້ອມນີ້, ກໍມີບັນດາສະມາຊິກຄະນະກຳມະການແຫ່ງຊາດ, ກອງເລຂາ ແລະ ພາກສ່ວນກະຊວງກ່ຽວຂ້ອງເຂົ້າຮ່ວມຈຳນວນ 60 ທ່ານ.





ກອງປະຊຸມໄດ້ມີການປຶກສາຫາລືຫຼາຍບັນຫາເຊັ່ນ: ສະພາບລວມການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໂດຍສະເພາະແມ່ນຄວາມຄືບໜ້າການປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍຮອບທີ 2 ຂອງ ສປປ ລາວ ຈາກ APG. ພ້ອມດຽວກັນ ກອງປະຊຸມຍັງໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຕຟງ ຄັ້ງໃນວັນທີ 17 ກຸມພາ 2021 ກ່ຽວກັບການກະກຽມການປະເມີນຮອບດ້ານຂອງ ສປປ ລາວ ທາງດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ຄະນະກຳມະການໄດ້ຮັບຮອງເອົາແຜນວຽກບູລິມະສິດຂອງ 04 ພາກສ່ວນ (1.ວຽກງານຄຸ້ມຄອງ; 2. ວຽກງານການດຳເນີນຄະດີ; 3.ວຽກງານນິຕິກຳແລະກົນໄກ ແລະ 4.ວຽກງານເຜີຍແຜ່ແລະເຊື່ອມຊຶມ).

ການປະເມີນດັ່ງກ່າວ ໄດ້ເລີ່ມຈັດຕັ້ງປະຕິບັດໃນເດືອນ ມີນາ ປີ 2020, ປະຈຸບັນ ສປປ ລາວ ໄດ້ສຳເລັດການນຳສົ່ງບົດລາຍງານດ້ານນິຕິກຳ ຮອບທີ 2 ແລະ ບົດລາຍງານດ້ານປະສິດທິຜົນ ຮອບທີ 1 ພ້ອມທັງບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຫຼາຍກວ່າ 200 ສະບັບ ໃຫ້ທີມປະເມີນ. ຊຶ່ງການກວດກາຕົວຈິງຂອງສາກົນ ແມ່ນຄາດຄະເນຈະຈັດຂຶ້ນໃນເດືອນ ພະຈິກ 2021 ທີ່ຈະມາເຖິງນີ້ ໃນໄລຍະການປະເມີນຕໍ່ ສປປ ລາວ ຍັງຕ້ອງໄດ້ສືບເລັ່ງສ້າງ ແລະ ປັບປຸງນິຕິກຳຈຳນວນໜຶ່ງທີ່ຕິດພັນກັບພາກສ່ວນຄຸ້ມຄອງ ກໍ່ຄືຫົວໜ່ວຍທີ່ມີໜ້າທີ່ລາຍງານ, ການກະທຳຜິດຕົ້ນທີ່ຕິດພັນກັບການຟອກເງິນຈຳນວນໜຶ່ງ ແລະ ສືບຕໍ່ຄົ້ນຄວ້າສ້າງແຜນຍຸດທະສາດແຫ່ງຊາດວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປີ 2021-2025 ເພື່ອໃຫ້ ສປປ ລາວ ເປັນບ່ອນອີງໃນການຊີ້ແຈງຕໍ່ສາກົນເພື່ອຮັບປະກັນບໍ່ໃຫ້ ສປປ ລາວ ຕົກຢູ່ໃນບັນຊີການຕິດຕາມຂອງສາກົນກ່ຽວກັບວຽກງານ AML/CFT ແລະ ຮັບປະກັນໄດ້ກັບວຽກງານ AML/CFT ຂອງ ສປປ ລາວ ໃຫ້ເປັນລະບົບ ແລະ ຫຍັບເຂົ້າໃກ້ມາດຖານສາກົນກົນເທື່ອລະກ້າວ.

ທັງໝົດນີ້, ແມ່ນຄວາມຄືບໜ້າ ທີ່ ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມແຜນການທີ່ວາງໄວ້. ເວົ້າລວມແລ້ວກໍ່ເພື່ອເຮັດໃຫ້ ລະບົບເສດຖະກິດ-ການເງິນ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**# ຂ່າວ: ສຳນັກງານຂໍ້ມູນຕ້ານການຟອກເງິນ**
**# ພາບ: ທ ສົມຜົດ ທຳມະວົງ**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ